ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ຕ່ອງໂສ້ມູນຄ່າອາຫານ
ໃນ ສປປ ລາວ

# ຄູ່ມື

## ການຜະລິດລູກປານິນ ຈິດລັດດາ 4






**ສະໜັບສະໜູນ ໂດຍ:**
ອົງການຮ່ວມມືສາກົນ ປະເທດ ຍີ່ປຸ່ນ (JICA)

# ຄຳນຳ

ໃນປະຈຸບັນ ຄວາມຮຽກຮ້ອງຕ້ອງການບໍລິໂພກຊີ້ນປາເຫັນວ່ານັບມື້ເພີ່ມຂຶ້ນເລື້ອຍໆ ໃນຄະນະດຽວກັນດ້ານລາຄາຕາມທ້ອງຕະຫຼາດກໍ່ເພີ່ມຂຶ້ນເຊັ່ນກັນ ເນື່ອງຈາກວ່າມີຫຼາຍສາຍເຫດເງື່ອນໄຂ. ເຊິ່ງໜຶ່ງໃນນັ້ນ, ກໍ່ຄືການເພີ່ມຂຶ້ນຂອງພົນລະເມືອງ ທີ່ເປັນຕ່ອງໂສ້ກັບດ້ານເສດຖະກິດດຳລົງຊີວິດ, ການປ່ຽນແປງທາງດ້ານດິນຟ້າອາກາດ ທຳມະຊາດ ແລະ ຄວາມດຸ່ນດ່ຽງຕອບສະໜອງດ້ານອຸປະໂພກ ບໍລິໂພກ ອື່ນໆ; ບາງບັນດາເງື່ອນໄຂເຫຼົ່ານັ້ນສະແດງໃຫ້ເຫັນຢ່າງເດັ່ນຊັດທີ່ກ່ຽວພັນກັບການປ່ຽນແປງສະພາບແວດລ້ອມ. ຕົວຢ່າງ, ຍ້ອນປາທີ່ເຄີຍຫາງ່າຍຈາກທຳມະຊາດນັບມື້ໄດ້ຫຼຸດໜ້ອຍຖອຍລົງ... ຊາວກະສິກອນຈຶ່ງໄດ້ຫັນມາລ້ຽງປາ ໂດຍນຳໃຊ້ດ້ານເຕັກນິວິຊາການໃຫ້ທັນກັບຕ່ອງໂສ້ການສະໜອງໂພສະນາການ.

ຈຸດປະສົງຄູ່ມືນີ້ພັດທະນາຂຶ້ນມາ ເພື່ອປັບປຸງຄວາມຮູ້ຄວາມສາມາດ ຂອງພະນັກງານສົ່ງເສີມການລ້ຽງປາ, ລະດັບຊາວກະສິກອນຂະໜາດນ້ອຍ, ກຸ່ມຜູ້ລ້ຽງປາ ແລະ ພາກສ່ວນທຸລະກິດເອກະຊົນ ນຳໃຊ້ເຕັກນິກວິຊາການຍົກສູງລະບົບການລ້ຽງປາໃນແຕ່ລະທ້ອງຖິ່ນຢ່າງເກີດມີປະສິດຕິຜົນ. ບົນພື້ນຖານຄວາມຮຽກຮ້ອງຕ້ອງການພັດທະນາຄູ່ມືດັ່ງກ່າວສຳເລັດຜົນ, ຄະນະວິຊາການສະເພາະດ້ານ ກົມສົ່ງເສີມກະສິກຳ ແລະ ສະຫະກອນ ໄດ້ເຮັດວຽກປະສານງານກັບຫຼາຍພາກສ່ວນທາງດ້ານວິຊາການ ພະແນກກະສິກຳ ແລະ ປ່າໄມ້ນະຄອນຫຼວງ. ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ນາຊາຍທອງ, ໄຊທານີ ຫາດຊາຍຟອງ, ສູນສະຖານີອ້ອມຂ້າງກົມສົ່ງເສີມຈຳນວນໜຶ່ງ, ໂຄງການ ໄຈກາ JICA ສະໜັບສະໜູນວິຊາການ ເຂົ້າໃນການຄົ້ນຄວ້າ, ທົດລອງ ແລະ ຜົນສຳເລັດທີປະກອບໃນຄູ່ມື.

ພວກເຮົາຫວັງຢ່າງຍິ່ງວ່າ: ຄູ່ມືນີ້ ຈະປະກອບສ່ວນຊ່ວຍໃຫ້ ພະນັກງານວິຊາການສົ່ງເສີມ ຂັ້ນ ເມືອງ, ແຂວງ, ສູນ ສະຖານີບໍລິການເຕັກນິກສາມາດນຳໃຊ້ງ່າຍໃນການນຳໃຊ້ ແລະ ຖ່າຍທອດບົດຮຽນ " ການຜະລິດລູກປານິນ ຈິດລັດດາ 04" ໃຫ້ຊາວກະສິກອນເປັນຢ່າງມີປະສິດຕິຜົນ. ຖ້າຫາກ ມີບາງເນື້ອໃນ ຫຼື ຫຼັກໄວຍາກອນ ອາດຂາດຕົກບົກຜ່ອງໃດໆ ທາງຄະນະຈັດທຳພວກເຮົາຍິນດີຮັບຄຳຕຳນິຕິຊົມຈາກບັນດາທ່ານເພື່ອປັບປຸງຄູ່ມືດັ່ງກ່າວໃຫ້ດີຂຶ້ນເລື້ອຍໆ.

# ສາລະບານ


**ຄຳນຳ……………………………………………………………………………………………ii**

1. ສະພາບລວມ………………………………………………………………………………1
2. ຈຸດປະສົງ………………………………………………………………………………..1
3. ປະຫວັດ ແລະ ຄຸນລັກສະນະຂອງປານິນ ຈິດລັດດາ 4……………………………………… 1

4. ຂັ້ນຕອນການຜະລິດລູກປານິນຈິດລັດດາ 4…………………………………………………......2

4.1. ການກະກຽມໜອງ ແລະ ກະຊັງຜະລິດລູກປາ………………………………………………2

4.2. ການກະກຽມກະຊັງພໍ່ແມ່ພັນ ແລະ ອະນຸບານລູກປາ………………………………………2

4.3. ອຸປະກອນທີ່ນຳໃຊ້ໃນການຜະລິດລູກປາ……………………………………………………2

4.4. ການຄັດເລືອກປາພໍ່ແມ່ພັນ ແລະ ອັດຕາການປ່ອຍ…………………………………………..2

4.5. ອັດຕາການປ່ອຍປາພໍ່ແມ່ພັນ ຈິດລັດດາ 4 ໃນກະຊັງ ລ້ຽງໃນໜອງດິນ……………………………..3

5. ອາຫານ ແລະ ການໃຫ້ອາຫານປາພໍ່ແມ່ພັນ……………………………………………………..4

6. ການຜະລິດລູກປານິນຈິດລັດດາ 4 ສາມາດປະຕິບັດໄດ້ 2 ວິທີການ……………………………...4

6.1. ການຜະລິດລູກປານິນໃນລະບົບຟັກໄຂ່………………………………………………………4

6.2. ການເກັບລູກປານິນໃນກະຊັງ ແລະ ການອະນຸບານລູກປາ……………………………………6

7. ປານິນຈິດລັດດາ 4 ແປງເພດ……………………………………………………………………7

8. ບັນຫາໃນການຜະລິດປານ້ອຍ…………………………………………………………………7

9. ຂໍ້ແນະນຳ ແລະ ສິ່ງທີ່ຄວນເອົາໃຈໃສ່……………………………………………………………..8

9.1. ຂໍ້ແນະນຳ…………………………………………………………………………………...8

9.2. ສິ່ງທີ່ຄວນເອົາໃຈໃສ່……………………………………………………………………………8

**ເອກະສານອ້າງອີງ……………………………………………………………………………………9**

## 1. ສະພາບລວມ.

ປານິນເປັນປານ້ຳຈືດຊະນິດນຶ່ງ ແລະ ເປັນເປັນເສດຖະກິດ ຊຶ່ງຜູ້ປະກອບກິດຈະການລ້ຽງປານິນໃນ ສ ປປ ລາວນິຍົມລ້ຽງໃນປະຈຸບັນຢ່າງຫຼວງຫຼາຍ, ໃນປີ 2024 ຄວາມຕ້ອງການລູກປານິນໄປລ້ຽງເປັນຈຳນວນຫຼາຍ, ແຕ່ການຜະລິດ ແລະ ສະໜອງລູກປານິນຢູ່ປະເທດເຮົາຍັງບໍ່ພຽງພໍກັບຄວາມຕ້ອງການຂອງຜູ້ລ້ຽງ, ສະນັ້ນ, ຈຶ່ງມີການນຳເຂົ້າລູກປານິນຈາກປະເທດເພື່ອນບ້ານເຂົ້າມາລ້ຽງນັບມື້ຫຼາຍຂື້ນ. ການລ້ຽງປານິນໃນປະຈຸບັນ ຜູ້ລ້ຽງສ່ວນໃຫຍ່ ພາກັນຊອກຊື້ລູກປານິນຈາກ ແຫຼ່ງຜະລິດລູກປາທີ່ໄດ້ຄຸນນະພາບ, ເຊື່ອຖືໄດ້ ແລະ ມີລູກປາສະໜອງຕະຫຼອດລະດູການຢ່າງພຽງພໍ.

ເພື່ອຄວາມໝັ້ນຄົງດ້ານແນວພັນປາ ແລະ ເປັນເຈົ້າຕົນເອງໃນການຜະລິດລູກປານິນໃຫ້ພຽງພໍ ທັງປະລິມານ ແລະ ຄຸນນະພາບ ໃນວັນທີ 15 ກັນຍາ 2023 ໂຄງການສ້າງຄວາມເຂັ້ມແຂງໃຫ້ຕ່ອງໂສ້ມູນຄ່າອາຫານໃນສປປ ລາວ (PSFVC) ກໍຄືກົມສົ່ງເສີມກະສິກຳ ແລະ ສະຫະກອນ (DAEC) ໄດ້ສົມທົບກັບ ກົມລ້ຽງສັດ ແລະ ການປະມົງ (DLF), ກະຊວງກະສິກຳ ແລະ ປ່າໄມ້ ໄດ້ນຳເຂົ້າພໍ່ແມ່ພັນປານິນແນວພັນຈິດລັດດາ 4 ມາຈາກກົມປະມົງແຫ່ງປະເທດໄທ ເຂົ້າມາລ້ຽງເປັນພໍ່ແມ່ພັນ ຈຳນວນ 7500 ໂຕ (ປານ້ອຍອາຍຸ 21 ວັນ), ມາມອບໃຫ້ ສູນພັດທະນາການປະມົງ ນ້ຳຊ່ວງ ຈຳນວນ 3.000 ໂຕ, ມອບໃຫ້ ສູນຄົ້ນຄ້ວາ ການປະມົງ ໜອງແຕ່ງ ຈຳນວນ 3.000 ໂຕ ແລະ ມອບໃຫ້ 1 ສູນຂອງພາກເອກະຊົນ ສູນຜະລິດປານິນໝັ້ນ ສາຂາ 2 ບ້ານນາດີ ເມືອງ ນາຊາຍທອງ ນະຄອນຫຼວງວຽງຈັນ ຈຳນວນ 1500 ໂຕ. ປະຈຸບັນສູນເອກະຊົນ ໄດ້ຍົກຍ້າຍກິດຈະການໄປສືບຕໍ່ຜະລິດລູກປາ ຢູ່ເມືອງ ພຽງ ແຂວງໄຊຍະບູລີ.

## 2. ຈຸດປະສົງ.

- ເພື່ອຜະລິດລູກປານິນແນວພັນຈິດລັດດາ 4 ໃຫ້ໄດ້ທັງປະລິມານ ແລະ ຄຸນະພາບ ສະໜອງໃຫ້ແກ່ກຸ່ມລ້ຽງປາກະຊັງ, ກຸ່ມລ້ຽງປາປະສົມປະສານ ແລະ ຊາວກະສິກອນຜູ້ສົນໃຈລ້ຽງປານິນໃນນະຄອນຫຼວງວຽງຈັນ ແລະ ແຂວງອື່ນໆ.
- ເພື່ອປະກອບສ່ວນເຂົ້າໃນການສົ່ງເສີມການຜະລິດພາຍໃນ ແລະ ທົດແທນການນຳເຂົ້າ.
- ເພື່ອສົ່ງເສີມການຜະລິດເປັນສິນຄ້າ ສະໜອງໃຫ້ແກ່ຕະຫຼາດພາຍໃນ

## 3. ປະຫວັດ ແລະ ຄຸນລັກສະນະຂອງປານິນ ຈິດລັດດາ 4.

ປານິນແນວພັນຈິດລັດດາ 4 ໄດ້ປັບປຸງພັນມາຈາກປານິນສາຍພັນ GIFT ລຸ້ນທີ 9 ໃນປີ 2552 ໃຫ້ມີຈຸດ ເດັ່ນກວ່າ ປານິນລຸ້ນອື່ນໆ ດັ່ງລຸ່ມນີ້:



1) ຫົວນ້ອຍ.
2) ສັນຫຼັງໜາ
3) ລຳໂຕກ້ວາງ ແລະ ກົມ
4) ປັບຕົວເຂົ້າກັບສະພາບແວດລ້ອມບ້ານເຮົາໄດ້ດີ.
5) ສາມາດປະສົມພັນ ແລະ ວາງໄຂ່ໄດ້ຕະລອດປີ ໃນໜອງ ແລະ ຕາມແຫຼ່ງນ້ຳທຳມະຊາດທົ່ວໄປ.
6) ຈະເລີນເຕີບໂຕດີ ແລະ ລ້ຽງໃຫຍ່ໄວ.
7) ໃຫ້ຜົນຜະລິດຫຼາຍກ່ວາປານິນທຳມະດາ 36-40% ແລະ ໃຫ້ຜົນຜະລິດຫຼາຍກ່ວາ ປານິນຈິດລັດດາ 3
8) ເນື້ອນຸ້ມ ກິນແຊບ

## 4. ຂັ້ນຕອນການຜະລິດລູກປານິນຈິດລັດດາ 4

### 4.1. ການກະກຽມໜອງ ແລະ ກະຊັງຜະລິດລູກປາ

- ສິ່ງທີ່ຄວນເອົາໃຈໃສ່.

1) ຕ້ອງດູດນໍ້າອອກໃຫ້ແຫ້ງ ແລະ ຕາກແດດໄວ້ປະມານ 2 ອາທິດ.
2) ຕ້ອງອະນາໄມພື້ນໜອງ ແລະ ຄັນຄູໜອງປາ ຕັດຫຍ້າອ້ອມຄູນອງເພື່ອປ້ອງກັນສັດຕູຂອງປາ.
3) ຕ້ອງຫວ່ານປູນຂາວໃຫ້ທົ່ວໜອງໃນອັດຕາ 20 ກຼາມ/$ມ^2$
4) ໃສ່ຝຸ່ນຄອກໃຫ້ທົ່ວພື້ນໜອງ.
5) ຫຼັງຈາກນັ້ນ ເອົານໍ້າເຂົ້າໜອງໃຫ້ໄດ້ລະດັບ 1ແມັດ ຫາ 1.5 ແມັດ ຫຼື 1 ແມັດເຄິ່ງ.
6) ພວກເຮົາຄວນຄຳນຶ່ງເຖິງອາຫານຂອງປາ ສ້າງອາຫານທຳມະຊາດ (ສ້າງນໍ້າຂຽວ) ໃນໜອງປາ.

### 4.2. ການກະກຽມກະຊັງພໍ່ແມ່ພັນ ແລະ ອະນຸບານລູກປາ

1). ກະຊັງໃນການລ້ຽງປາພໍ່ແມ່ພັນຈິດລັດດາ 4 ແມ່ນມີຂະໜາດ 4 x 6 ຫຼື 5 x 8 ແມັດ ເຮົາໃຊ້ຕາໜ່າງ ຫຼື ເອີ້ນອີກຊື່ນຶ່ງ ວ່າ ດາງສີຟ້າ. ອີງຕາມເງື່ອນໄຂ ຂອງຜູ້ລ້ຽງ. ແຕ່ໃນນີ້ ຍົກຕົວຢ່າງເອົາຂະນາດ 5 x 8 ແມັດ,

2). ກະຊັງອະນຸບານລູກປາຂະໜາດ 2 x 3 ແມັດ ເຮົາໃຊ້ຕາໜ່າງສີຟ້າ.

3). ໄມ້ສຳລັບເຮັດເສົາຫຼັກມັດກະຊັງຄວາມຍາວ 3 ແມັດ ເພື່ອປັບຂຶ້ນລົງໄດ້ ເວລານໍ້າໃນໜອງເພີ້ມຂຶ້ນ ຫຼື ຫລຸດລົງ. ໄມ້ເສົາຫຼັກກະຊັງໃຫ້ມີຄວາມທົນທານ ຮັບປະກັນບໍ່ໃຫ້ຫັກງ່າຍ.

### 4.3. ອຸປະກອນທີ່ນຳໃຊ້ໃນການຜະລິດລູກປາ

1). ຄຸ ແລະ ຊາມ

2). ກະຕ່ອງຈັບປາພໍ່ແມ່ພັນ

3). ກະຕ່ອງຈັບປານ້ອຍ

4). ກະຕ່ອງຄັດຂະໜາດລູກປາ

5). ຊີງຊັ່ງນໍ້າໜັກ

6). ຖົງມືຈັບປາພໍ່ແມ່ພັນ

7). ປູນຂາວ ແລະ ຝຸ່ນຄອກ

### 4.4. ການຄັດເລືອກປາພໍ່ແມ່ພັນ ແລະ ອັດຕາການປ່ອຍ

ການຄັດເລືອກປາພໍ່ແມ່ພັນແມ່ນຂັ້ນຕອນສຳຄັນທີ່ສຸດ ພວກເຮົາຕ້ອງໄດ້ເອົາໃຈໃສ່ ຄັດເລືອກເອົາປາ ພໍ່ແມ່ພັນ ທີ່ສົມບູນ ແຂງແຮງ. ເພື່ອຮັບປະກັນການຖ່າຍທອດພັນທຸກຳຈຸດເດັ່ນຂອງພໍ່ແມ່ພັນໄປສູ່ລຸ້ນລູກ. ປານ້ອຍຈະມີການຈະເລີນເຕີບໂຕດີ, ລ້ຽງໃຫຍ່ ໄວ ແລະ ສາມາດ ສ້າງຄວາມເຊື່ອໝັ້ນ ໄວ້ວາງໃຈຕໍ່ລູກຄ້າ.

1). ລັກສະນະປາເພດຜູ້ຈະມີຂະໜາດໃຫຍ່ກ່ວາປາເພດແມ່ (ປາໃນລຸ້ນດ່ຽວກັນ)

2). ລັກສະນະປາເພດແມ່ຈະມີສີເຂັ້ມກວ່າປາຜູ້

3). ປາຍຫາງເພດຜູ້ ແລະ ເພດແມ່ ຈະອອກແດງໜ້ອຍນຶ່ງ.




ຮູບທີ 1: ປາພໍ່ແມ່ພັນຈິດລັດດາ 4




ຮູບທີ 2: ການແຍກພໍ່ແມ່ພັນປານິນ ຈິດລັດດາ 4



ຮູບທີ3: ກະຊັງພໍ່ແມ່ພັນປານິນຈິດລັດດາ 4

**4.5. ອັດຕາການປ່ອຍປາພໍ່ແມ່ພັນ ຈິດລັດດາ 4 ໃນກະຊັງ ລ້ຽງໃນໜອງດິນ.**

1) ສູນຄົ້ນຄ້ວາການປະມົງໜອງແຕ່ງ, ສະຖາບັນຄົ້ນຄ້ວາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ. ສູນຜະລິດປານິນໝັນ ບ້ານນາດີ ເມືອງນາຊາຍທອງ ໃຊ້ອັດຕາການປ່ອຍພໍ່ແມ່ພັນແມ່ນ 1/2 (ປາພໍ່ພັນ 1 ໂຕ/ປາແມ່ພັນ 2 ໂຕ). ຖ້າໃຫ້ອັດຕາ 1/3 ໄຂ່ປາອອກມາຈະບໍ່ສົມບູນດີ.
2) ການປ່ອຍປານິນພໍ່ແມ່ພັນຈິດລັດດາ 4 ໃນກະຊັງຂະໜາດ 5 x 8 ແມັດ, ຈະປ່ອຍປາ 60 ໂຕ, ໃນນັ້ນພໍ່ພັນ 20 ໂຕ ແລະ ແມ່ພັນ 40 ໂຕ. (ສຳລັບສູນຄົ້ນຄ້ວາ ການປະມົງໜອງແຕ່ງ). ມັນຂຶ້ນກັບເງື່ອນໄຂ ຂອງຜູ້ລ້ຽງໃຫ້ເບິ່ງຕົວຈິງ.
3) ຕົວຢ່າງ ບົດຮຽນຕົວຈິງ ຢູ່ ສູນຜະລິດປານິນໝັນ ບ້ານາດີ ເມືອງນາຊາຍທອງ ຂະໜາດກະຊັງ 5 x 8 ແມັດ ປ່ອຍປາ ພໍ່ແມ່ພັນ 300 ໂຕ. ປາຜູ້ 100 ໂຕ ແລະ ປາແມ່ 200 ໂຕ.
4) ອາຍຸຂອງປາພໍ່ແມ່ພັນ ປະມານ 9- 10 ເດືອນ ຈຶ່ງໃຫ້ໄຂ່ ແລະ ຂະໜາດປາພໍ່ແມ່ພັນນ້ຳໜັກ ສະເລັ່ຍ 6-10 ໂຕຕໍ່ກິໂລ ແມ່ນເ ໝາະສົມ ແລະ ສະດວກໃນການຈັບເຄາະເອົາໄຂ່ປາອອກຈາກປາກປາແມ່.



ຮູບທີ 4: ກະຊັງລ້ຽງປານິນພໍ່ແມ່ພັນ ຈິດລັດດາ 4. ທີ່ສູນຜະລິດປາ ບ້ານ ນາດີ

## 5. ອາຫານ ແລະ ການໃຫ້ອາຫານປາພໍ່ແມ່ພັນ

1). ສິ່ງທີ່ຄວນເອົາໃຈໃສ່ການໃຫ້ອາຫານຄວນຄຳນຶງເຖິງ 4 ຖືກ: 1. ຖືກສູດ, 2. ຖືກອັດຕາ, 3. ຖືກເວລາ ແລະ 4. ຖືກວິທີ.

2). ໃຫ້ອາຫານປາສຳເລັດຮູບທີ່ມີທາດໂປຼຕີນ 35 ເປີເຊັນ ມີຫຼາຍຍີ່ຫໍ້ເຊັ່ນ: ເຟີດຟິດ, ຄວາມຫວັງໃໝ່, SOM ຂອງຫວຽດນາມ ແລະ ອື່ນໆ ມີຂາຍຕາມຮ້ານຂາຍຫົວອາຫານ ແລະ ໃຫ້ອັດຕາ 3 ເປີເຊັນຂອງນ້ຳໜັກປາຕໍ່ວັນ.

3). ເພື່ອໃຫ້ປາຈະເລີນເຕີບໂຕດີ ຄວນໃຫ້ອາຫານທີ່ຫາໄດ້ຕາມທ້ອງຖິ່ນເຊັ່ນ: ຮຳ, ເຂົ້າປຽນ ແລະ ສາລີບົດ.

4). ການໃຫ້ອາຫານປາພໍ່ແມ່ພັນ ຄວນໃຫ້ສອງຄັ້ງ (ຕອນເຊົ້າ ແລະ ຕອນແລງ) ທຸກໆ ວັນເພື່ອເຮັດໃຫ້ປາແມ່ພັນໃຫ້ໄຂ່ຫຼາຍ ແລະ ເປັນປົກກະຕິດີ. **ແຕ່ບໍ່ຄວນເກືອປາພໍ່ແມ່ພັນໃຫ້ອີ່ມດີ ຈະເຮັດໃຫ້ປາຕຸ້ຍມີບັນຫາໃນການປະສົມພັນ.** ການໃຫ້ອາຫານປາພໍ່ແມ່ພັນ ຈະແຕກຕ່າງກັບ ການລ້ຽງປາຊີ້ນ.

5). ການລ້ຽງທອມພໍ່ແມ່ພັນ ເພື່ອໃຫ້ປາມີສຸຂະພາບແຂງແຮງ ໃນການປະສົມພັນ,

6). ໜອງປາທີ່ລ້ຽງປາພໍ່ແມ່ພັນຕ້ອງໃສ່ຝຸ່ນຄອກສະໜ່ຳສະເໜີ (ຂີ້ຄວາຍ ຫຼື ຂີ້ງົວ) ເພື່ອເຮັດໃຫ້ນ້ຳເກີດມີອາຫານທຳມະຊາດ.

7). ການໃຫ້ອາຫານປາພໍ່ແມ່ພັນແມ່ນບໍ່ໃຫ້ຫຼາຍ, ເພາະຈະເຮັດໃຫ້ປາພໍ່ແມ່ພັນຕຸ້ຍຫຼາຍ ແລະ ສິ່ງຜົນໃນການຜະລິດລູກປາ.

8). ຖ້າການໃຫ້ອາຫານປາບໍ່ພຽງພໍ ປາພໍ່ແມ່ພັນກໍ່ບໍ່ໃຫ້ໄຂ່ສະໜ່ຳສະເໜີ ແລະ ໄຂ່ປາທີ່ໄດ້ມາກໍ່ບໍ່ສົມບູນ ຈະເຮັດໃຫ້ຂະໜາດປາໂຕນ້ອຍ ຫຼື ໂຕຄອດ ມີຜົນກະທົບ ຕໍ່ການຖ່າຍທອດພັນທຸກຳໄປຫາລູກ.



ຮູບທີ 5: ການໃຫ້ອາຫານພໍ່ແມ່ພັນປານິນ ຈິດລັດດາ 4 ລ້ຽງໃນອ່າງສີມັງ ແລະ ໃສ່ກະຊັງໃນໜອງ

## 6. ການຜະລິດລູກປານິນຈິດລັດດາ 4 ສາມາດປະຕິບັດໄດ້ 2 ວິທີການ.

### 6.1. ການຜະລິດລູກປານິນໃນລະບົບຟັກໄຂ່

- ການເກັບໄຂ່ປາຈາກປາກແມ່ພັນແມ່ນແນະນຳໃຫ້ເກັບທຸກໆ 2 ອາທິດ

- ວິທີແມ່ນເກັບເອົາໄຂ່ຈາກປາກໂຕແມ່ແລ້ວມາໃສ່ອ່າງຟັກໄຂ່ປາ, ໄຂ່ປານິນມີການພັດທະນາຂອງໄຂ່ 5 ໄລຍະ. ຄຸນລັກສະນະຂອງ ໄຂ່ປາ ແຕ່ເບີ 1-5.

  - ໄລຍະທີ: 1 ຈະມີສີເຫຼືອງອ່ອນ, ໄລຍະທີ: 2 ຈະມີສີເຫຼືອງເຂັ້ມ





  - ໄລຍະທີ: 3 ຫາ 4 ຈະມີສີນ້ຳຕານ ແລະ ມີຕາ ໄລຍະທີ: 5 ມີລັກສະນະເປັນປານິນຂະໜາດແບບສົມບູນ.











ເຄາະເອົາໄຂ່ປານິນ ອອກຈາກປາກ

ຮູບທີ 6. ຄຸນລັກສະນະຂອງ ໄຂ່ປາແຕ່ລະໄລຍະ

- ພາຍລັງເຄາະເອົາໄຂ່ຈາກປາກແມ່ພັນແລ້ວ ນຳເອົາໄຂ່ໄປສູ່ຂະບວນການຟັກ.
- ພາຍຫຼັງເກັບເອົາໄຂ່ ຈາກປາກແມ່ປານິນແລ້ວ ໃຫ້ທຳຄວາມສະອາດ ອະນາໄມ ອ່າງສີມັງ ແລະ ຂ້າເຊື້ອ.



ຮູບທີ7: ການຟັກໄຂ່ປາ ລະບົບນ້ຳໝູນວຽນຢູ່ສູນພັດທະນາການປະມົງນ້ຳຊ່ວງ





ຮູບທີ 8: ລະບົບຟັກໄຂ່ປາໃສ່ຖາດຂອງ ສູນຜະລິດປານິນໜັນ ບ້ານາດີ.

### 6.2. ການເກັບລູກປານິນໃນກະຊັງ ແລະ ການອະນຸບານລູກປາ

#### 6.2.1. ການເກັບລູກປາໃນກະຊັງ

- ການເກັບລູກປານ້ອຍອອກຈາກກະຊັງ ຫຼື ຈາອ່າງສີມັງ ແມ່ນໃຫ້ປະຕິບັດທຸກໆ 9 ວັນ/ຄັ້ງ ຫຼື 3 ຄັ້ງ/ເດືອນ. ໃນຊ່ວງເດືອນ 1-2, ໃນຊວງເດືອນ 3-4 ເກັບລູກປານ້ອຍທີ່ແຕກເບາະແລ້ວ 2 ຄັ້ງ/ເດືອນ. ໃນກໍລະນີນີ້ ແມ່ນໄລຍະທີ 5 ຫຼື ເອີ້ນວ່າ ປາເບີ 5 ມີລັກສະນະເປັນປານິນຂະໜາດແບບສົມບູນ.
- ແມ່ພັນປານິນ 1 ໂຕ ສາມາດໃຫ້ໄຂ່ໄດ້ 250-280 ໜ່ວຍ/ແມ່/ຕໍ່ຄັ້ງ. ອັດຕາການແຕກເບາະ ເປັນປານ້ອຍ ຈະຍັງເຫຼືອ 30%.
- ກະຊັງປາພໍ່ແມ່ພັນ 1 ກະຊັງສາມາດເກັບລູກປາໜຶ່ງຄັ້ງໄດ້ປະມານ 3,000 ໂຕ.

#### 6.2.2. ການອະນຸບານລູກປາໃນກະຊັງ

- ການອະນຸບານປານ້ອຍ ເຮົາສາມາດເຮັດໄດ້ ສາມຮູບແບບຄື: 1. ອະນຸບານໃສ່ກະຊັງ ໃນໜອງດິນ. 2. ອະນຸບານໃສ່ອ່າງສີມັງ. 3. ອະນຸບານປານ້ອຍໃສ່ໜອງດິນ
- ກະຊັງອະນຸບານຂະໜາດ 2 x 3 ແມັດ ຈະອະນຸບານລູກປາ 3,000 ຫາ 5,000 ໂຕ.
- ອາຫານສຳລັບ ອະນຸບານລູກປາໃຫ້ອາຫານຝຸ່ນທີ່ມີໂປຼຕີນ 45 ເປີເຊັນ ໂດຍຫວ່ານກະຈາຍທົ່ວກະຊັງໃນອັດຕາການໃຫ້ຄິດໄລ່ 15 ເປີເຊັນ /ນ້ຳໜັກປາລວມ. ວິທີທີ 2. ເຮົາໃຫ້ເປັນຈຸດ ກໍໄດ້ ແຕ່ຮັບປະກັນໃຫ້ປານ້ອຍໄດ້ກິນອາຫານພຽງພໍ.



1. ຮູບແບບ ການອະນຸບານປານ້ອຍໃສ່ກະຊັງ ໃນໜອງດິນ. ທີ່ສູນຄົ້ນຄ້ວາ ການປະມົງໜອງແຕ່ງ



2. ຮູບແບບ ການອະນຸບານປານ້ອຍໃສ່ອ່າງສີມັງ ທີ່ສູນພັດທະນາການປະມົງນຊ້າຊ່ວງ.



3. ຮູບແບບ ການອະນຸບານປານ້ອຍໃນໜອງດິນ ທີ່ສູນຄົ້ນຄ້ວາການປະມົງ ໜອງແຕ່ງ.

ຮູບທີ 9: ຮູບແບບການອະນຸບານລ້ຽງປາ

## 7. ປານິນຈິດລັດດາ 4 ແປງເພດ.

ຖ້າລ້ຽງເປັນປານິນແປງເພດແນະນຳ ໃຫ້ເອົາປາເບີ 5 ມີລັກສະນະເປັນປານິນຂະໜາດແບບສົມບູນ ຈະມີຄວາມສະດວກກວ່າ ບໍ່ຫຼາຍຂັ້ນຕອນ ຄືລະບົບຟັກໄຂ່ໃສ່ຖາດ ແລະ ລະບົບຟັກໄຂ່ ນ້ຳໝູນວຽນ.

- ສູດປະສົມຮໍໂມນແປງເພດ.
  1). ຮໍໂມນ ຈຳນວນ 3 ກຼາມ
  2). ປາປົ່ນ ຈຳນວນ 16 ກິໂລກຼາມ
  3). ເຫຼົ້າ 90 ຈຳນວນ 5 ລິດ
- ວິທີປະສົມສ່ວນຕ່າງເຂົ້າກັນ.
  1) ເອົາຮໍໂມນ ເທລົງໃສ່ ເຫຼົ້າ 90 ປະສົມໃຫ້ເຂົ້າກັນດີ ແລ້ວ ອັດຝາປະໃວ້
  2) ເອົາປາປົ່ນເທລົງໃສ່ຊາມ ແລະ ເອົາສ່ວນປະສົມຮໍໂມນ ກັບເລົ້າ 90 ເທລົງ ເທື່ອລະໜ້ອຍ ປະສົມໃຫ້ເຂົ້າກັນດີ ເຮັດໄປເລື້ອຍໆ ຈົນກ່ວາວ່າ ສ່ວນປະສົມຕ່າງເຂົ້າກັນເປັນເນື້ອດຽວກັນ.
- ວິທີໃຫ້ອາຫານ ອະນຸບານປານິນແປງເພດ. ຕົວຢ່າງ ຈຳນວນປານິນ 5000 ໂຕ ໃຫ້ອາຫານ 15 ກຼາມ, ເຮົາໃຫ້ອາຫານເທື່ອລະໜ້ອຍ ມື້ນຶ່ງ ໃຫ້ 5-6 ຄັ້ງ. ເວລາໃຫ້ຄັ້ງສຸດທ້າຍ ປະມານ 5:00 ໂມງແລງ. ອະນຸບານ ຈົນຮອດ ອາຍຸ 21 ວັນ ຈຶ່ງຕັດບໍ່ໃຫ້ກິນອາຫານຮໍໂມນແປງເພດ. ຈະໄດ້ ປານິນແປງເພດ 85% ໃນໄລຍະເວລາ 6 ເດືອນ. ສ່ວນທີ່ເຫຼືອ 15% ປາໂຕນ້ອຍ ແລະ ບໍ່ແປງເພດໄດ້. ແຕ່ຖ້າມີການຄວບຄຸມທີ່ດີ ເອົາໃຈໃສ່ໃຫ້ປາໄດ້ກິນຮໍໂມນແປງເປັນເຕັມຄວາມຄວາມຕ້ອງຈະໄດ້ເຕັມ 99%

## 8. ບັນຫາໃນການຜະລິດປານ້ອຍ.

1. ໄພພິບັດ (ຝົນຕົກ ຄັ້ງທຳອິດ, ກໍຈະເຮັດໃຫ້ປາຕາຍ, ຝົນຕົກໜັກນ້ຳຖ້ວມ...)
2. ປາຂາດອົກຊີ ໃນຊວງ ຍາມແລງ ແລະ ຕອນເຊົ້າ.
3. ລະບົບໄຟຟ້າ ບໍ່ສະຖຽນ. ໄຟຟ້າຕົກ ໄຟດັບ..ກະທົບໃສ່ການຟັກໄຂ່ປາ ລະບົບນ້ຳໝູນວຽນ.
4. ສັດຕູປາ
5. ຄວາມຮັບຜິດຊອບຂອງຜູ້ຜະລິດ ບໍ່ມີຄວາມອົດທົນ, ໃຈຮ້ອນ, ຜະລິດຕາມໃຈ ບໍ່ເອົາຕະຫຼາດນຳ.

## 9. ຂໍ້ແນະນຳ ແລະ ສິ່ງທີ່ຄວນເອົາໃຈໃສ່

### 9.1. ຂໍ້ແນະນຳ

- ການຊື້ພໍ່ແມ່ພັນປານິນມາລ້ຽງໃນເບື້ອງຕົ້ນ ໃຫ້ຊອກຊື້ ແຫຼ່ງຜະລິດແນວພັນປາ ທີ່ເຂົາເຈົ້າ ໄລໜອງ ອອກ, ບໍ່ຄວນຊື້ປາຈາກການວ່ານແຫ ຫຼື ປາຈາກການໃສ່ມອງ ເພາະຈະເຮັດໃຫ້ປາເຈັບໂຕ ເກັດລອອກອອກ ເອົາມາລ້ຽງ ບໍ່ເກີນ 3 ມື້ ປາກໍຈະຕາຍ.
- ການອະນຸບານປານ້ອຍ ທັງສາມຮູບແບບ ຈະມີຈຸດດີ ແລະ ຈຸດອ່ອນ ແຕກຕ່າງກັນ. ຜູ້ລ້ຽງສາມາດເລືອກເອົາຕາມເງື່ອນໄຂ ແລະ ທ່າແຮງຂອງຕົນເອງ.
- ອະນຸບານປານ້ອຍໃສ່ໜອງດິນ ປາຈະເຕີບໂຕໃຫຍ່ໄວກ່ວາໃນອ່າງສີມັງ, ເພາະວ່າມີອາຫານຫຼາຍແຫຼ່ງ.
- ສຳລັບຜູ້ບໍ່ມີເງື່ອນໄຂຟັກໄຂ່ປາໃນລະບົບໃສ່ຖາດ ແນະນຳໃຫ້ ເອົາ**ຂະໜາດຂອງປານ້ອຍໄລຍະທີ 5 ຫຼື ເອີ້ນວ່າ ເບີ 5 ມີລັກສະນະເປັນປານິນຂະໜາດແບບສົມບູນ** ຈະມີຄວາມສະດວກ ບໍ່ມີຫຼາຍຂັ້ນຕອນ ຄື ລະບົບຟັກໄຂ່ໃສ່ຖາດ ມາລ້ຽງອະນຸບານ ເພື່ອຈຳໜ່າຍ ຫຼື ລ້ຽງເປັນປາຊີ້ນ.
- **ການຂະຫຍາຍອອກສູ່ວົງກ້ວາງ** ປະຈຸບັນແນວພັນປານິນຈິດລັດດາ 4 ໄດ້ແຜ່ຂະຫຍາຍອອກຈາກ ນະຄອນຫຼວງວຽງຈັນ ໄປແຂວງ ເມືອງພຽງ ແຂວງ ໄຊຍະບູລີ ໃນປີ 2024. ຜູ້ໃດສົນໃຈຢາກໄດ້ ລູກປານິນແນວພັນຈິດລັດດາ 4 ສາມສາດພໍ່ພັນໄດ້ ທີ່ ສູນພັດທະນາການປະມົງ ນ້ຳຊ່ວງ, ສູນຄົ້ນຄ້ວາການປະມົງ ໜອງແຕ່ງ ແລະ ບ້ານນ້ຳເຮັບ: ເມືອງພຽງ ແຂວງ ໄຊຍະບູລີ.

### 9.2. ສິ່ງທີ່ຄວນເອົາໃຈໃສ່.

- ເພີ່ມຄວາມເອົາໃຈໃສ່ເພາະວ່າ ໃນປະຈຸບັນ ສະພາບການປ່ຽນແປງດິນຟ້າອາກາດ ໃນລະດູຝົນ ມັກມີລົມແຮງ, ລົມພະຍຸ, ຝົນຕົກໜັກ ຈະເຮັດໃຫ້ກະຊັງປາພໍ່ແມ່ພັນ ແລະ ກະຊັງອະນຸບານລູກປາພົບບັນຫາຢູ່ເລື້ອຍໆເຊັ່ນ: ລົມພັດຫລັກກະຊັງຫັກ, ກະຊັງປີ້ນ, ຂີ້ຕົມຖົມກະຊັງ, ນ້ຳຖ້ວມກະຊັງເຮັດໃຫ້ປາອອກກະຊັງ.
- ສຳລັບໜອງດິນ ຕ້ອງໄດ້ເອົາໃຈໃສ່ປ້ອງກັນ ແລະ ຮັບປະກັນຄູໜອງປາ ບໍ່ໃຫ້ນ້ຳຖ້ວມ, ນ້ຳໄຫຼຊຸ ໄຫຼທັງ. ຕ້ອງກະກຽມສະຖານທີ ສຳຮອງໃວ້ ຮອງຮັບ ເວລາສຸກເສີນ. ຫຼີກລ້ຽງຄວາມເສັຍຫາຍຈະເກີດຂື້ນ.
- ເວລາຂົນສົ່ງລູກປາ ຜູ້ຜະລິດ ຫຼື ຜູ້ຊື້ປານ້ອຍ ເພື່ອບໍລິການ ຕ້ອງຮັບປະກັນ ໃຫ້ມີບັງອົກຊີໃຫ້ພຽງພໍ ໃນໄລຍະເດີນທາງ ເຖິງທີ່ໝາຍ. ຫ້າມບໍ່ໃຫ້ປາຂາດອົກຊີ ໃນເວລາຂົນສົ່ງລູກປາ. ຕ້ອງຂົນສົ່ງຍາມຕອນອາກາດເຢັນ.
- ທຸກຂັ້ນຕອນການຜະລິດລູກປານິນມີຄວາມສຳຄັນໝົດ ການຄັດເລືອກພໍ່ແມ່ພັນ, ການລ້ຽງຫອມພໍ່ແມ່ພັນ, ການເກັບໄຂ່ຈາກປາກແມ່ພັນ,ຂະບວນການຟັກໄຂ່ປາ, ການເກັບເອົາປານ້ອຍໃນກະຊັງ, ການອະນຸບານປານ້ອຍ ເພື່ອໃຫ້ໄດ້ລູກປາທີ່ມີຄຸນນະພາບ, ສົມບູນດີ, ຈຳນວນພຽງພໍ ແລະ ມີໃວ້ສະໜອງໃຫ້ແກ່ລູກຄ້າຕະຫຼອດ. ຖ້າມີຕະຫຼອດ ກໍຈະມີຕະຫຼາດ.

## 9. ການໄລ່ລຽງເສດຖະກິດ. (ຍົກຕົວຢ່າງເອົາ ປາພໍ່ແມ່ພັນ ຈຳນວນ 60 ໂຕມາຄິດໄລ່).

| ລາຍການ | ຫົວໜ່ວຍ | ລາຄາ (ກີບ) | ລວມເງີນ (ກີບ) |
|---|---|---|---|
| **1. ຕົ້ນທຶນການຜະລິດ** | - | - | 3.769.000 |
| - ພໍ່ແມ່ພັນ 60 ໂຕ ນ້ຳໜັກໂຕ/ກລ | (20 ກລ) | 40,000/24 ດ | 33.000 |
| - ອາຫານພໍ່ແມ່ພັນປາ | 6 ເປົາ | 400,000 | 2.400.000 |
| - ອາຫານປານ້ອຍ | 3 ເປົາ | 440.000 | 1.320.000 |
| - ກະຊັງ (2x3 ແມັດ) | 1 ດາງ | 400,000/24 ດ | 16.000 |

| | | | |
|---|---|---|---|
| **2. ຜົນຜະລິດ** | - | - | 7.500.000 |
| - ຈຳນວນປານ້ອຍທີ່ໄດ້ຮັບ ແລະ ຂາຍອອກ | 30,000 ໂຕ | 250 | 7.500.000 |
| **3. ດຸ່ນດ່ຽງ (2-1)** | | - | 3.731.000 |

## ເອກກະສານອ້າງອີງ


1. AQUA BIZ. 2023. 58 ປີ ແຫ່ງຄວາມໝັ້ນຄົງ ທາງອາຫານ ຈາກຈຸດເລີ່ມຕົ້ນ ສູ່ ປານິນຈິດລັດດາ 4. https://www.facebook.com/aquabizmagazine
2. ອຸໄລທຳ ລາຊະສິມາ. 2014. ປື້ມຄູ່ມືຝຶກອົບຮົມ ການຜະລິດລູກປານິນໃນເຂດພື້ນທີ ນ້ຳຖ້ວມ. ໂຄງການ IRAS/DAEC.
3. ລຽງຄຳ ສີວິໄລ. 2001. ການຜະລິດລູກປານິນເພດຜູ້, ສູນຄົ້ນຄວ້າການປະມົງ, ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ ແຫ່ງຊາດ, ກະຊວງກະສິກຳ ແລະ ປ່າໄມ້.



**ພັດທະນາໂດຍ:**

ກົມສົ່ງເສີມກະສິກຳ ແລະ ສະຫະກອນ, ກະຊວງກະສິກຳ ແລະ ປ່າໄມ້

ໂຄງການ ສ້າງຄວາມເຂັ້ມແຂງໃຫ້ແກ່ຕ່ອງໂສ້ມູນຄ່າອາຫານ ຢູ່ ສປປ ລາວ

ນະຄອນຫຼວງວຽງຈັນ, ສປປ ລາວ
ກະຊວງ ກະສິກຳ ແລະ ປ່າໄມ້
ກົມສົ່ງເສີມກະສິກຳ ແລະ ສະຫະກອນ
ໂທ: 021 732072, ແຟັກ: 021 730072
ຕິດຕໍ່: ພະແນກສົ່ງເສີມປຸງແຕ່ງ ແລະ ໂພຊະນາການ
ອີເມວໂຄງການ: lao.fvc.project@gmail.com